ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທ່ານຜູ້ວ່າການ ທຫລ ສຳເລັດການເຂົ້າຮ່ວມກອງປະຊຸມລະດັບສູງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ 10 (10th ASEAN Finance Ministers and Central Bank Governors' Meeting: AFMGM) ທີ່ ຈາກາຕາ, ປະເທດ ອິນໂດເນເຊຍ




ໃນລະຫວ່າງວັນທີ 24-25 ສິງຫາ 2023, ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການ ທຫລ ໄດ້ນຳພາ ຄະນະຜູ້ແທນ ທະນາຄານແຫ່ງ ສປປ ລາວ ສຳເລັດການເຂົ້າຮ່ວມກອງປະຊຸມລະດັບສູງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ 10 (10th ASEAN Finance Ministers and Central Bank Governors' Meeting: AFMGM) ທີ່ ຈາກາຕາ, ປະເທດ ອິນໂດເນເຊຍ ໂດຍມີຜູ້ຕາງໜ້າຈາກ 10 ທະນາຄານກາງຂອງປະເທດສະມາຊິກອາຊຽນ ແລະ ທະນາຄານກາງ ຕີມໍ ເລສເຕ ໃນນາມເປັນຜູ້ສັງເກດການ, ກອງເລຂາອາຊຽນ (ASEC), ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງຄື: ອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 (AMRO), ອົງການກອງທຶນລະຫວ່າງປະເທດ (IMF), ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ Word Bank, ແລະ ຄະນະກຳມະການຮັກສາສະຖຽນລະພາບທາງການເງິນ (Financial Stability Board) ເຂົ້າຮ່ວມກອງປະຊຸມດັ່ງກ່າວ.

ກອງປະຊຸມ AFMGM ຄັ້ງທີ 10 ໄດ້ຈັດຂຶ້ນເປັນຄັ້ງທີ 02 ຂອງປີ 2023 ພາຍໃຕ້ການເປັນປະທານຂອງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ອິນໂດເນເຊຍ ແລະ ເປັນພັນທະຂອງ ທຫລ ຕ້ອງໄດ້ເຂົ້າຮ່ວມເພື່ອປຶກສາຫາລືລາຍງານສະພາບການເສດຖະກິດຂອງຕົນຕໍ່ພາກພື້ນ ແລະ ສາກົນ, ແຜນການຂໍຮັບຮອງພາຍໃຕ້ຂະບວນການກອງປະຊຸມ AFMGM ເພື່ອກະກຽມໄປລາຍງານໃນກອງປະຊຸມສຸດຍອດອາຊຽນ ຊຶ່ງຄາດວ່າຈະຈັດຂຶ້ນໃນເດືອນ ກັນຍາ 2023, ແລະ ບັນດາແຜນຍຸດທະສາດຫຼັກ ແລະ ຂໍ້ລິເລີ່ມຕ່າງໆໂດຍສະເພາະແຜນຂອງປະທານອາຊຽນ 2023 ປະເທດ ອິນໂດເນເຊຍ ໃນການເພີ່ມທະວີຄວາມເຂັ້ມແຂງທາງດ້ານການເງິນໃນພາກພື້ນການຮ່ວມມືຂ້າມຂະແໜງການ (Cross-sectoral Collaboration) ພາຍໃຕ້ຂະບວນການທາງດ້ານການເງິນຊຶ່ງປະກອບມີ 04 ໜ່ວຍງານຍ່ອຍ (Working Groups: WGs) ຄື: WG1 ວຽກງານປະກັນໄພທາງດ້ານສະພາບດິນຟ້າອາກາດ ແລະ ໄພທຳມະຊາດ (Disaster Risk  and Finance Insurance: DRFI); WG2 ການຮ່ວມລະຫວ່າງການເງິນ ແລະ ສາທາລະນະສຸກ (Finance and Health); WG3 ການຄໍ້າປະກັນດ້ານສະບຽງອາຫານ (Food Security); ແລະ WG4 ບັນຫາການຮ່ວມມືກັບຂະແໜງການອື່ນໆ; ແລະ ການເໜີສ້າງຕັ້ງໜ່ວຍງານການປັບປຸງພາລະບົດບາດຂອງແຕ່ລະຄະນະກຳມະການ  (Task Force on Revisiting WCs'mandate) ເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດຂອງຂະແໜງການເງິນ-ທະນາຄານກາງອາຊຽນຫຼັງປີ 2025 ຊຶ່ງທີ່ປະຊຸມໄດ້ສະໜັບສະໜູນຕໍ່ກັບຂໍ້ລິເລີ່ມດັ່ງກ່າວ ແລະ ສືບຕໍ່ເພີ່ມທະວີການຮ່ວມມືໃນພາກພື້ນແນໃສ່ເພື່ອສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດມະຫາພາກ, ການເງິນຍືນຍົງ ແລະ ການຫັນປ່ຽນເປັນທັນສະໄໝ.







ນອກນີ້, ເພື່ອເສີມຂະຫຍາຍການຮ່ວມມື ແລະ ເຊື່ອມໂຍງກັບບັນດາທະນາຄານກາງໃນພາກພື້ນ ທຫລ ແລະ ທະນາຄານກາງ ມາເລເຊຍ ກໍ່ໄດ້ຖືໂອກາດເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັນເພື່ອເປັນການຮັດແໜ້ນສາຍພົວພັນລະຫວ່າງ 2 ທະນາຄານກາງໂດຍສະເພາະວຽກງານການຮ່ວມມືແລກປ່ຽນຂໍ້ມູນຂ່າວສານ, ການພັດທະນານະວັດຕະກຳທາງການ ເງິນ, ການຊຳລະສະສາງ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ໃນຕອນທ້າຍ ທ່ານຜູ້ວ່າການທະນາຄານກາງ ທຫລ ແລະ ທ່ານ Abdul Rasheed Ghaffour, ຜູ້ວ່າການທະນາຄານກາງ ມາເລເຊຍ ໄດ້ສະແດງຄວາມຂອບໃຈຊຶ່ງກັນ ແລະ ກັນ ຕໍ່ໝາກຜົນສຳເລັດລະຫວ່າງ 2 ທະນາຄານກາງ (ສປປ ລາວ ແລະ ມາເລເຊຍ) ໃນຄັ້ງນີ້ ແລະ ການຮ່ວມມືກັນຢ່າງໃກ້ສິດໃນອະນາຄົດ.

ພ້ອມດຽວກັນນີ້, ທ່ານຜູ້ວ່າການ ທຫລ ຍັງໄດ້ພົບປະເຮັດວຽກກັບ ທ່ານ Kenji Okamura, ຮອງຜູ້ອຳນວຍການໃຫຍ່ ອົງການ IMF ເພື່ອປຶກສາຫາລືການຈັດຕັ້ງປະຕິບັດນະໂຍບາຍເສດຖະກິດມະຫາພາກ ແລະ ແຜນການໃນຕໍ່ໜ້າຂອງ ສປປ ລາວ ແລະ ນອກຈາກນັ້ນ, ຍັງໄດ້ປຶກສາຫາລືກັບ ທ່ານ Satvinder Singh ຮອງເລຂາທິການ ກອງເລຂາອາຊຽນ ກ່ຽວກັບ Priority Economic Deliverable (PEDs) ເພື່ອກະກຽມເປັນປະທານອາຊຽນ 2024 ຂອງ ສປປ ລາວ ແລະ ການຊ່ວຍເຫຼືອສະໜັບສະໜູນ ສປປ ລາວ ໃນການເປັນປະທານດັ່ງກ່າວ.







ໃນທ້າຍກອງປະຊຸມ, ສປປ ລາວ ໄດ້ສະແດງຄວາມຂອບໃຈ ກະຊວງການເງິນ ແລະ ທະນາຄານກາງ ອິນໂດເນເຊຍ ຕໍ່ກັບຜົນສຳເລັດໃນການເປັນເຈົ້າພາບ ແລະ ປະທານກອງປະຊຸມລະດັບສູງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ໃນຄັ້ງນີ້ ແລະ ຍັງໄດ້ກ່າວຮັບຕຳແໜ່ງໃນນາມ ສປປ ລາວ ຈະໄດ້ເປັນເຈົ້າພາບ ແລະ ປະທານກອງປະຊຸມ AFMGM ຄັ້ງທີ 11 ຊຶ່ງຈະຈັດຂຶ້ນທີ່ ສປປ ລາວ ທີ່ນະຄອນຫລວງວຽງຈັນ ໃນຕົ້ນປີ 2024.

**# ຂ່າວ ແລະ ພາບໂດຍ: ພະແນກຮ່ວມມືຫຼາຍຝ່າຍ, ກົມຮ່ວມມືສາກົນ**

**ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ**